ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 14 ຫາ 18 ສິງຫາ 2023




ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການປູກຫອມປ້ອມນອກລະດູ

ໃນໄລຍະລະດູຝົນພືດຜັກໃນຕະຫຼາດແມ່ນມີລາຄາສູງຂຶ້ນເນື່ອງມາຈາກການປູກພືດຜັກໃນໄລຍະນີ້ປະສົບກັບບັນຫາຫຼາຍຢ່າງເປັນຕົ້ນຝົນຕົກຕໍ່ເນື່ອງພືດຫຼາຍຊະນິດແມ່ນເກີດການເນົ່າເປື່ອຍເນື່ອງຈາກຄວາມຊຸມສູງ ແລະ ສັດຕູພືດ, ຜັກຫອມປ້ອມກໍ່ເຊັ່ນດຽວກັນໃນໄລຍະລະດູຝົນແມ່ນມີລາຄາສູງເຖິງກິໂລລະ 100.000 ກີບ-120.000 ກີບ. ດັ່ງນັ້ນໃນວາລະສານສະບັບນີ້ຈຶ່ງນຳເອົາເຕັກນິກການປູກຜັກຫອມປ້ອມນອກລະດູມາເຜີຍແຜ່ເພື່ອເປັນຄວາມຮູ້ແກ່ຊາວກະສິກອນ ເຊິ່ງມີຂັ້ນຕອນດັ່ງນີ້:

1. **ການປູກຜັກຫອມປ້ອມໃນພື້ນທີ່ເຂດຊຸ່ມນໍ້າ**

- ຂຸດ ຫຼື ໄຖດິນຕາກແດດໃຫ້ແຫ້ງ ເພື່ອທຳລາຍພະຍາດແມງໄມ້ ສັດຕູພືດ ແລະ ວັດສະພືດທີ່ຢູ່ໃນດິນປະໄວ້ປະມານ 10 ມື້.
- ຖ້າດິນເປັນກົດໃຫ້ໃສ່ປູນຂາວໃນອັດຕາສ່ວນ 50 ກິໂລກຼາມ/ໄລ່, ເພື່ອປັບສະພາບຂອງດິນ.
- ຫຼັງຈາກນັ້ນໄຖຄາດດິນໃຫ້ລະອຽດເກັບເສດວັດສະພືດຕ່າງໆອອກຫວ່ານຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ສະລາຍຕົວດີແລ້ວ ໃນອັດຕາສ່ວນ 2-4 ໂຕນຕໍ່ໄລ່.
- ຈາກນັ້ນຍົກດິນເປັນໜານປູກໃຫ້ກວ້າງປະມານ 1-1,5 ແມັດ, ສ່ວນຄວາມຍາວແມ່ນຂຶ້ນກັບຄວາມເໝາະສົມຂອງພື້ນທີ່ ຍົກໜານໃຫ້ສູງປະມານ 25-30 ຊັງຕີແມັດ ຫຼື ອາດສູງເຖິງ 50 ຊັງຕີແມັດ ຫາກພື້ນທີ່ປູກລະບາຍນໍ້າຍາກແມ່ນໃຫ້ຈີ່ງຮ່ອງລະບາຍນໍ້າລະຫວ່າງໜານຕໍ່ໜານໃຫ້ກວ້າງປະມານ 50 ຊັງຕີແມັດ ເພື່ອໃຫ້ສາມາດລະບາຍນໍ້າໄດ້.

2. **ການມຸງໜານປູກ**

- ການມຸງໜານໂດຍໃຊ້ຜ້າກັນແສງມຸງ ເພື່ອປ້ອງກັນການກະທົບຂອງນໍ້າຝົນ ແລະ ມຸງໃຫ້ສູງຈາກໜ້າດິນປະມານ 1,2-1,5 ແມັດ.
- ໃຊ້ໄມ້ໄຜ່ ຫຼື ໄມ້ທີ່ສາມາດຫາໄດ້ງ່າຍໃນພື້ນທີ່ປັກຂອບໜານທັງສອງຂ້າງ ໄລຍະຫ່າງລະຫວ່າງຫຼັກຕໍ່ຫຼັກປະມານ 2-3 ແມັດ.
- ຈາກນັ້ນກໍ່ນຳຜ້າກັນແສງມາປົກແລ້ວມັດໃຫ້











ແໜ້ນດີເພື່ອບໍ່ໃຫ້ເປ່ເພ່ເວລາມີລົມ.

**3. ການກຽມແນວພັນ**

ຜັກຫອມປ້ອມເປັນພືດທີ່ຂະຫຍາຍພັນໂດຍການໃຊ້ເມັດ ດັ່ງນັ້ນ ກ່ອນຈະປູກຕ້ອງກຽມເມັດພັນໃຫ້ພ້ອມໂດຍການນຳເອົາເມັດມາທັບໃຫ້ແຕກເປັນສອງປ່ຽງ ແລ້ວນຳໄປແຊ່ນ້ຳ ປະມານ 2-3 ຊົ່ວໂມງ ຫຼັງຈາກນັ້ນນຳມາບົ່ມໄວ້ຈົນເມັດເລີ່ມແຕກງອກຈຶ່ງນຳໄປຫວ່ານໃສ່ໜານ, ແນວພັນທີ່ປູກໃນໄລຍະລະດູຝົນຄວນນຳໃຊ້ແນວພັນຫອມປ້ອມໃຫຍ່ ເພາະແນວພັນຫອມປ້ອມນ້ອຍທີ່ເປັນພັນພື້ນບ້ານແມ່ນບໍ່ເໝາະເພາະເປັນແນວພັນທີ່ບໍ່ຕ້ານທານຕໍ່ຄວາມຊຸ່ມສູງ.

**4. ການປູກ ຫຼື ຫວ່ານເມັດ**

- ກ່ອນຈະປູກ ຫຼື ຫວ່ານເມັດຕ້ອງຫົດນ້ຳໃຫ້ທົ່ວໜານນຳແກ່ນພັນທີ່ກຽມໄວ້ຫວ່ານລົງໜານປູກ ອາດຫວ່ານແບບຂີດເປັນຮ່ອງເປັນແຖວຫ່າງກັນ 15-20 ຊັງຕີແມັດ ອັດຕາເມັດພັນປະມານ 20 ກິໂລກຼາມຕໍ່ໄລ່ ຫຼື ຫວ່ານແບບທົ່ວໄປເລີຍກໍ່ໄດ້.
- ເອົາເຟືອງ ຫຼື ແກບມາປົກຄຸມເພື່ອຮັກສາຄວາມຊຸ່ມຫຼັງຈາກນັ້ນຫົດນ້ຳໃຫ້ຊຸ່ມ.
- ຫຼັງຈາກຫອມປ້ອມງອກຂຶ້ນມາປະມານ 5 ວັນ ແລະ ມີໃບແທ້ ໃຫ້ໃສ່ຝຸ່ນ 46-0-0 ປະມານ 15-30 ກຼາມໂດຍປະສົມນ້ຳ 10 ລິດ ສີດພົ່ນໃຫ້ທົ່ວໜານປູກ, ການໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ ຊຶ່ງຊາວກະສິກອນສາມາດຜະລິດຜັກຫອມປ້ອມໄດ້ສູງເຖິງ 1.500 ກິໂລກຼາມ/ໄລ່
- ຜັກຫອມປ້ອມຈະເລີ່ມເກັບກ່ຽວໄດ້ເມື່ອອາຍຸໄດ້ປະມານ 30-45 ວັນ, ເນື່ອງຈາກວ່າຜັກຫອມປ້ອມສາມາດໃຊ້ໄດ້ທຸກພາກສ່ວນເພື່ອບໍລິໂພກຄວນເກັບກ່ຽວໂດຍການຖອນດ້ວຍມືໃຫ້ຕິດທັງຕົ້ນ ແລະ ຮາກບໍ່ໃຫ້ຂາດ.

ແຫຼ່ງຂໍ້ມູນຈາກ: ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;